ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 2910 /ກປ

ນະຄອນຫລວງວຽງຈັນ, ວັນທີ 06 JUL 2010

# ຄຳສັ່ງ

## ຂອງລັດຖະມົນຕີ

## ກ່ຽວກັບການເພີ້ມທະວີຄວາມຮັບຜິດຊອບຕໍ່ການປ້ອງກັນ ແລະ ຄວບຄຸມ ພະຍາດທາງເດີນຫາຍໃຈ ແລະ ລະບົບອະໄວຍະວະສືບພັນໝູເຊື້ອມ( ພະຍາດຫູໝູກ່ຳ)

ເຖິງ: ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫລວງ.

- ອີງໃສ່ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 03/ສພຊ, ລົງວັນທີ 25/07/2008.
- ອີງໃສ່ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10/05/2007 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງໃສ່ ການລາຍງານສະພາບການລະບາດ ຂອງພະຍາດທາງເດີນຫາຍໃຈ ແລະ ອະໄວຍະວະສືບພັນໝູ ເຊື້ອມ ທີ່ກຳລັງລະບາດ ຢູ່ນະຄອນຫລວງວຽງຈັນ, ສປປ ລາວ.

ໃນຊ່ວງທ້າຍເດືອນ 06.2010 ໄດ້ມີລາຍງານການກວດພົບເຊື້ອພະຍາດ ແລະ ການລະບາດຂອງ ພະຍາດທາງເດີນຫາຍໃຈ ແລະ ລະບົບອະໄວຍະວະສືບພັນໝູເຊື້ອມ ຫລື ພະຍາດຫູໝູກ່ຳ (Porcine Reproductive Respiratory and Syndrome, PRRS) ຢູ່ 3 ເມືອງ ຄື: ເມືອງຫາດຊາຍຟອງ, ເມືອງສີສັດຕະນາກ ແລະ ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ ມາເຖິງປັດຈຸບັນນີ້ ໄດ້ມີໝູ ຕາຍແລ້ວ 150 ກວ່າໂຕ ແລະ ຍັງເຈັບຢູ່ຫລາຍສິບໂຕ. ພະຍາດດັ່ງກ່າວ ແມ່ນພະຍາດຕິດແປດຮ້າຍ ແຮງສຳລັບໝູ ເປັນພະຍາດທີ່ເກີດຂຶ້ນໃໝ່ ຢູ່ ສປປ ລາວ, ຊຶ່ງໄດ້ສ້າງຜົນກະທົບ ທາງລົບຕໍ່ການລ້ຽງໝູ ໜັກໜ່ວງພໍສົມຄວນ. ໝູທີ່ຕິດພະຍາດນີ້ ຈະສະແດງອາການອອກໃນສອງລັກສະນະ ຄື: 1) ຢູ່ໃນລະ ບົບການຫາຍໃຈ ຊຶ່ງສະແດງອອກດ້ວຍອາການເປັນຫວັດ, ຂີ້ມູກຍ້ອຍ, ຈ່ອຍ ແລະ ມີອາການ ປອດ ບວມຮຸນແຮງ ແລະ 2) ຢູ່ໃນລະບົບການຂະຫຍາຍພັນ ມີຜົນກະທົບຢ່າງຮ້າຍແຮງ ສຳລັບໝູແມ່ທີ່ຖືພາ ໂດຍສະເພາະ ແມ່ນໃນໄລຍະສຸດທ້າຍຂອງການຖືພາ ຈະພາໃຫ້ອອກກ່ອນກຳນົດ, ແທ້ງລູກ, ລູກໝູ ຕາຍຢູ່ໃນທ້ອງແມ່ ຫລື ຕາຍຕອນຄອດອອກມາ, ໂຕທີ່ລອດຕາຍຈະມີສຸຂະພາບອ່ອນເພຼັຽ, ໝູແມ່

ເບື່ອອາຫານ, ບໍ່ມີນ້ຳນົມໃຫ້ລູກກິນ, ສ່ວນໃຫ່ຍພະຍາດນີ້ ຈະມີລັກສະນະແບບຊ້ຳເຮື້ອແກ່ຍາວ, ຖ້າເປັນໝູສີຂາວ ຈະສັງເກດເຫັນໃບຫູກ່ຳດຳ ຄ້າຍໆ ຄືກັນກັບພະຍາດອະຫິວາໝູ.

ເພື່ອມີມາດຕະການອັນເຂັ້ມງວດໃນການປ້ອງກັນ ແລະ ຄວບຄຸມ ບໍ່ໃຫ້ພະຍາດດັ່ງກ່າວ ແຜ່ລາມອອກສູ່ວົງກ້ວາງ ຊຶ່ງຈະກໍ່ໃຫ້ເກີດມີຄວາມສູນເສັຽຕໍ່ເສດຖະກິດຂອງຊາດ ແລະ ຕໍ່ຊັບສິນ ຂອງປະຊາຊົນ.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫລວງ ເປັນເຈົ້າການ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈັດຕັ້ງໂຄສະນາ ເຜີຍແຜ່ ປຸກລະດົມໃຫ້ທຸກສຳນັກງານອົງການ, ອົງການຂອງລັດ, ກະຊວງ, ອົງການທຽບເທົ່າ, ວິສາຫະກິດ, ບຸກຄົນ ຫລືນິຕິບຸກຄົນ ທີ່ພົວພັນເຖິງການລ້ຽງໝູ, ການຊື້ຂາຍໝູ ແລະ ຜະລິດຕະພັນໝູ, ການເຄື່ອນຍ້າຍນຳເຂົ້າໝູ ຫລື ຜະລິດຕະພັນໝູ ໃນທົ່ວປະເທດ ເຂົ້າໃຈເຖິງຄວາມອັນຕະລາຍ ຮ້າຍແຮງ ຂອງພະຍາດທາງເດີນຫາຍໃຈ ແລະ ລະບົບອະໄວຍະວະສືບພັນໝູເຊື້ອມ ພ້ອມທັງ ຊຸກຍູ້ ແນະນຳ ໃຫ້ເອົາໃຈໃສ່ ປະຕິບັດກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ຢ່າງເຄັ່ງຄັດ.

2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫລວງ ຊີ້ນຳ ແລະ ມອບໝາຍ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ສົມທົບກັບຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ຊຸກຍູ້ ແນະນຳປະຊາຊົນ ໃຫ້ເອົາໃຈໃສ່ ຕິດຕາມ ກວດກາ ສຸຂະພາບສັດລ້ຽງຂອງຕົນ ຢ່າງໃກ້ສິດ ຖ້າພົບເຫັນໝູໝູ ທີ່ມີອາການສະແດງອອກທາງລະບົບຫາຍໃຈ ເຊັ່ນ: ມີອາການເປັນຫວັດ, ໄອ, ຈາມ, ຂີ້ມູກຍ້ອຍ, ຈ່ອຍຜອມ ແລະ ສຳລັບໝູແມ່ທີ່ຖືພາ ແມ່ນຄອດລູກກ່ອນກຳນົດ, ແທ້ງລູກ, ລູກໝູຕາຍຢູ່ໃນທ້ອງແມ່ ດັ່ງທີ່ກ່າວໄວ້ຂ້າງເທິງນັ້ນ ໃຫ້ແຍກກັກຂັງ ໄວ້ຕ່າງຫາກ, ພ້ອມນັ້ນ ກໍໃຫ້ເຈົ້າຂອງສັດຮີບຮ້ອນລາຍງານໃຫ້ສັດຕະວະແພດບ້ານ ຫລື ນາຍບ້ານ ໂດຍດ່ວນ ແລ້ວລາຍງານຕໍ່ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອໃຫ້ພະນັກງານສັດຕະວະແພດ ລົງໄປຕິດຕາມກວດກາພະຍາດຕົວຈິງ.

3. ໃຫ້ຈັດຕັ້ງທີມງານວິຊາການ ຕິດຕາມ ເຝົ້າລະວັງພະຍາດ ຢ່າງເຂັ້ມງວດ, ພ້ອມນີ້ ກໍໃຫ້ກຽມພ້ອມດ້ານກຳລັງຄົນ, ວັດຖຸອຸປະກອນ, ງົບປະມານ, ຍານພາຫະນະ ແລະ ຊັກຊ້ອມ ເພື່ອກຽມຮັບມືກັບການລະບາດ ຂອງພະຍາດ, ຈັດຕັ້ງລົງພາກສະໜາມ ເພື່ອປ້ອງກັນ ແລະ ປິ່ນປົວ ຕິດຕາມ ກວດກາເກັບກຳຂໍ້ມູນ, ເກັບຊິ້ນສ່ວນຕົວຢ່າງ ສົ່ງກວດວິໄຈ ເພື່ອສືບຫາພະຍາດ ຕາມຫລັກວິຊາການດ້ານລະບາດວິທະຍາ; ພ້ອມນັ້ນ, ໃຫ້ລາຍງານ ສະພາບສັດເຈັບ ຫລື ຕາຍ ທຸກວັນ, ຫາກບໍ່ມີກໍໃຫ້ລາຍງານ " ບໍ່ມີ "

4. ກໍລະນີ ໄດ້ຮັບການຢືນຢັນຈາກຫ້ອງວິໄຈ ພົບໝູຕິດເຊື້ອພະຍາດ ທາງເດີນຫາຍໃຈ ແລະ ລະບົບອະໄວຍະວະສືບພັນໝູເຊື້ອມ ໃຫ້ລົງໄປກວດກາຕົວຈິງ ພ້ອມທັງກໍານົດ ຂອບເຂດລະບາດຂອງພະຍາດ ໂດຍໃຫ້ອີງໃສ່ເງື່ອນໄຂສະພາບແວດລ້ອມ ແລະ ທາງດ້ານພູມສາດເປັນຫລັກ, ພ້ອມນັ້ນ ກໍໃຫ້ນໍາສະເໜີ ອົງການປົກຄອງທ້ອງຖິ່ນ ປະກາດເປັນເຂດພະຍາດລະບາດສັດ ຢ່າງເປັນທາງການ ແລະ ຊຸກຍູ້ ແນະນໍາ ເຈົ້າຂອງສັດ ໃຫ້ປະຕິບັດດັ່ງນີ້:
   - ໃຫ້ແຍກສັດເຈັບອອກ ຈາກຝູງ ແລ້ວທໍາການປິ່ນປົວ.
   - ຫ້າມບໍ່ໃຫ້ຂ້າສັດ ທີ່ກ່ຽວຂ້ອງກັບພະຍາດ ທີ່ກໍາລັງລະບາດ ນັບທັງສັດທີ່ແຂງແຮງ ຫລື ສັດເຈັບ ໃນເຂດພະຍາດລະບາດ
   - ຫ້າມນໍາເອົາສິ້ນສ່ວນຕ່າງໆ ຂອງສັດຕາຍ ໄປປຸງແຕ່ງເປັນອາຫານ ຫລື ຈໍາໜ່າຍຊື້ຂາຍ.
   - ຫ້າມບໍ່ໃຫ້ປະຊາກສົບສັດ ໃຫ້ເໜົ່າເປື່ອຍ ຫລື ຖິ້ມລົງໜອງ, ຫ້ວຍທົ່ລໍາເຊເດັດຂາດ, ໃຫ້ເຜົາ ຫລື ຝັງໃຫ້ເລິກ ແລ້ວໂຮຍດ້ວຍປູນຂາວ ຫລື ຢາຂ້າເຊື້ອອື່ນໆ.
   - ໃຫ້ເຮັດອະນາໄມ ແລະ ຂ້າເຊື້ອພະຍາດດ້ວຍຢາຂ້າເຊື້ອ ໃນບ່ອນທີ່ພົບເຫັນສັດເຈັບ ຫລື ຕາຍຢ່າງທົ່ວເຖິງ.
   - ຫ້າມບໍ່ໃຫ້ເຄື່ອນຍ້າຍສັດ ຫລື ຜະລິດຕະພັນສັດທຸກຊະນິດ ເຂົ້າ-ອອກ ໃນເຂດພະຍາດລະບາດສັດ ຫລື ສົງໃສວ່າມີພະຍາດລະບາດ ຢ່າງເດັດຂາດ ຈົນກ່ວາວ່າການລະບາດຂອງພະຍາດດັ່ງກ່າວ ໄດ້ສະຫງົບລົງເປັນປົກກະຕິ ຄື 30 ວັນ ຫລັງຈາກອາການສັດເຈັບ ໂຕສຸດທ້າຍໃນຝູງ ຫາຍດີເປັນປົກກະຕິ.
   - ໃຫ້ສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຕັ້ງຈຸດດ່ານກວດກາ ການລັກລອບເຄື່ອນຍ້າຍໝູ ຫລື ຜະລິດຕະພັນໝູ ຫາກພົບເຫັນຜູ້ລະເມີດ ຝ່າຝືນ ໃຫ້ດໍາເນີນຄະດີຕາມກົດໝາຍ, ສ່ວນໝູ ຫລື ຜະລິດຕະພັນໝູ ຂອງກາງ ຕ້ອງສົ່ງໃຫ້ສັດຕະວະແພດເມືອງ ຫລື ແຂວງ/ນະຄອນຫລວງ ກັກກັນ (ໝູ) ແລະ ທໍາລາຍຕໍ່ໄປ (ຜະລິດຕະພັນໝູ).
   - ສໍາລັບໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ໃຫ້ຂ້າໝູ ທີ່ມີສຸຂະພາບແຂງແຮງ ແລະ ໄດ້ຜ່ານການກວດກາ ຈາກພະນັກງານກວດກາອະນາໄມຊີ້ນ ຈຶ່ງອະນຸຍາດໃຫ້ນໍາໄປຈໍາໜ່າຍ ຢູ່ຕາມທ້ອງຕະລາດ ພ້ອມນັ້ນ ກໍຕ້ອງອໍານວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ກັບເຈົ້າໜ້າທີ່ສັດຕະວະແພດ ໃນເວລາລົງໄປຕິດຕາມກວດກາ.

5. ຫ້າມບໍ່ໃຫ້ນໍາເຂົ້າໝູ ແລະ ຜະລິດຕະພັນໝູ ຈາກປະເທດໃກ້ຄຽງ ທີ່ກໍາລັງມີການລະບາດ ຂອງພະຍາດທາງເດີນຫາຍໃຈ ແລະ ລະບົບອະໄວຍະວະສືບພັນໝູເຊື້ອມ ແລະ ພະຍາດຕິດແປດຮ້າຍແຮງອື່ນໆ ຈົນກ່ວາຈະມີການແກ້ໄຂດ້ານພະຍາດ ໃຫ້ເຂົ້າສູ່ສະພາບປົກກະຕິ, ໃນກໍລະນີ ຫາກກວດພົບເຫັນ ການນໍາເຂົ້າ ຫລື ລັກລອບນໍາເຂົ້າໝູ ຫລື ຜະລິດຕະພັນໝູ ທີ່ບໍ່ຖືກຕ້ອງ ໃຫ້ກວດຢຶດ ແລະ ນໍາໄປ ທໍາລາຍຖິ້ມດ້ວຍການເຜົາ ຫລື ຝັງ, ສ່ວນຜູ້ທີ່ລະເມີດໃຫ້ກ່າວເຕືອນ, ປັບໃໝ ຫລື ດໍາເນີນຄະ ດີຢ່າງເຂັ້ມງວດ.

6. ໃຫ້ກົມລ້ຽງສັດ ແລະ ການປະມົງຈັດຕັ້ງທີມງານວິຊາການປະຈຳການເພື່ອຕິດຕາມ, ຮັບສ່ອງແສງລາຍງານການລະບາດຂອງພະຍາດຈາກທ້ອງຖິ່ນ; ໃນກໍລະນີຈຳເປັນກໍຕ້ອງຈັດຕັ້ງທີມງານລົງຊ່ວຍທ້ອງຖິ່ນຢ່າງທັນການ, ພ້ອມດຽວກັນນັ້ນໃຫ້ ອອກຄຳແນະນຳດ້ານວິຊາການຊີ້ນຳຂະແໜງການສາຍຕັ້ງຂອງຕົນເພື່ອຈັດຕັ້ງຜັນຂະຫຍາຍຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ.

ໃຫ້ມີການສະລຸບລາຍງານ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບນຳ ເປັນແຕ່ລະໄລຍະ.

7. ເມື່ອໄດ້ຮັບແຈ້ງການສະບັບນີ້ແລ້ວ ຈົ່ງພ້ອມກັນນຳໄປຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

**ສິຕາເຮັ່ງ ຣາຊະພົນ**

ບ່ອນນຳສົ່ງ:

| | |
|---|---|
| - ຄະນະເລຂາທິການລັດຖະບານ (ເພື່ອໃຊ້ຕາງລາຍງານ) | 1 ສະບັບ |
| - ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ (ເພື່ອຊາບ ແລະ ອອກຂ່າວ) | 1 ສະບັບ |
| - ກະຊວງສາທາລະນະສຸກ | 1 ສະບັບ(ເພື່ອຊາບ) |
| - ກະຊວງອຸດສາຫະກຳ ແລະ ການຄ້າ | 1 ສະບັບ(ເພື່ອຊາບ) |
| - ຫ້ອງວ່າການປົກຄອງແຂວງ/ນະຄອນຫລວງ (ເພື່ອຊ່ວຍຊີ້ນຳການຈັດຕັ້ງປະຕິບັດ) | 1 ສະບັບ |
| - ດ່ານສາກົນ (15 ດ່ານ) (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື) | 1 ສະບັບ |
| - ກົມ, ກອງ, ສູນ, ສະຖາບັນອອ້ມຂ້າງ | 1 ສະບັບ(ເພື່ອຊາບ) |
| - ກົມລ້ຽງສັດ ແລະ ການປະມົງ (ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມ) | 1 ສະບັບ |
| - ເກັບມ້ຽນ | 1 ສະບັບ |